**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ອຍຊອນ-ຫ້ອຍຊື້ວ ເລກທີ.331.../ສພບ

ນະຄອນຫຼວງວຽງຈັນ, ວັນທີ.13.105.12024

## ໜັງສືແຈ້ງເຊີນປະມູນ

- ອີງຕາມ ແຈ້ງການ ຂອງກະຊວງແຜນການ ແລະ ການລົງທຶນ ກ່ຽວກັບ ແຈ້ງແຜນງົບປະມານການລົງທຶນຂອງລັດ ປະຈຳປີ 2024 (ຄັ້ງທີ I) ສະບັບເລກທີ 0193/ກຜທ.ກຜ4, ລົງວັນທີ 26 ມັງກອນ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການມອບໂຄງການ ສຳຫຼວດ-ອອກແບບ ລະບົບຊົນລະປະທານ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ ໃຫ້ ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ອຍຊອນ-ຫ້ອຍຊື້ວ ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ສະບັບເລກທີ 1055/ກປ, ລົງວັນທີ 12 ມີນາ 2024;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການລົງທຶນຂອງລັດ ໂຄງການ ສຳຫຼວດ-ອອກແບບ ລະບົບຊົນລະປະທານ ຂອງ ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ອຍຊອນ-ຫ້ອຍຊື້ວ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ສະບັບເລກທີ 2491/ກປ, ລົງວັນທີ 03 ພຶດສະພາ 2024.

1. ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ອຍຊອນ-ຫ້ອຍຊື້ວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂຄຸນນະວຸທິເໝາະສົມ ເຂົ້າຮ່ວມປະມູນ ໂຄງການ ສຳຫຼວດ-ອອກແບບ ລະບົບຊົນລະປະທານ ຂອງ ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ອຍຊອນ-ຫ້ອຍຊື້ວ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ດັ່ງນີ້;
   - ບໍລິສັດ ມີປະສົບການທີ່ກ່ຽວຂ້ອງກັບການສຳຫຼວດ-ອອກແບບ ຊົນລະປະທານ ຫຼື ຄ້າຍຄືກັນໃນໄລຍະ 5 ປີຜ່ານມາ ຢ່າງໜ້ອຍ 2 ສັນຍາ, ມູນຄ່າ 1 ຕື້ກີບຂຶ້ນໄປ;
   - ມີໃບອະນຸຍາດດຳເນີນທຸລະກິດ ຂະແໜງຊົນລະປະທານ ຊັ້ນ 2 ຂຶ້ນໄປ;
   - ມີໃບມອບພັນທະອາກອນ ປະຈຳປີ 2023.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ອຍຊອນ-ຫ້ອຍຊື້ວ; ສອບຖາມຂໍ້ມູນ ແລະ ລົງກວດກາສະໜາມຕົວຈິງໄດ້ ໂດຍພົວພັນຫາ ທ່ານ ພອນມະນີ ໄຊຍະເຊດຖາ, ຫົວໜ້າຂະແໜງຊົນລະປະທານ, ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ອຍຊ້ອນ-ຫ້ອຍຊື້ວ, ເບີໂທລະສັບ 020 55699445 ແລະ ຊື້ເອກະສານປະມູນ ໄດ້ຕາມສະຖານທີ່ຂ້າງລຸ່ມນີ້ (ໃນໂມງລັດຖະການ) ນັບແຕ່ມື້ແຈ້ງການເປັນຕົ້ນໄປ.

4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນ ຕ້ອງຍື່ນໜັງສືສະເໜີຫາ ຫ້ອງການບໍລິຫານ ແລະ ແຜນການ, ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊ້ອນ-ຫ້ວຍຊື້ອ (ໃນໂມງລັດຖະການ), ເລີ່ມແຕ່ 13 ພຶດສະພາ 2024 ເປັນຕົ້ນໄປ, ໃນລາຄາ 2.000.000 ກີບຕໍ່ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ.

5. ຊອງປະມູນຕ້ອງສົ່ງ, ໃນເວລາ ຫລື ກ່ອນເວລາ 14:00 ໂມງ, ວັນທີ 17 ມິຖຸນາ 2024 ທີ່ ຫ້ອງການບໍລິຫານ ແລະ ແຜນການ, ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊ້ອນ-ຫ້ວຍຊື້ອ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 14:30 ໂມງ, ວັນທີ 17 ມິຖຸນາ 2024 ທີ່ ຫ້ອງການງບໍລິຫານ ແລະ ແຜນການ, ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊ້ອນ-ຫ້ວຍຊື້ອ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນ-ຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້.

6. ທຸກໆ ຊອງປະມູນຕ້ອງໄດ້ ມີໜັງສືຄ້ຳປະກັນການປະມູນອອກໂດຍທະນາຄານ ຊຶ່ງມູນຄ່າການຄ້ຳປະກັນ ບໍ່ໃຫ້ຫຼຸດ 2% ຂອງລາຄາສະເໜີເຂົ້າປະມູນ.

7. ທີ່ຢູ່: ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊ້ອນ-ຫ້ວຍຊື້ອ ຕັ້ງຢູ່ບ້ານນາຍາງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ.

   - **ສະຖານທີ່ຊື້ເອກະສານປະມູນ:**

     1) ຫ້ອງການບໍລິຫານ ແລະ ແຜນການ, ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊ້ອນ-ຫ້ວຍຊື້ອຕັ້ງຢູ່ບ້ານນາຍາງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ. ທ່ານ ພອນມະນີ ໄຊຍະເຊດຖາ ເບີໂທລະສັບ 020 55699445.

   - **ສະຖານທີ່ສົ່ງຊອງ ແລະ ບ່ອນເປີດຊອງປະມູນ:**

     1) ຫ້ອງການບໍລິຫານ ແລະ ແຜນການ, ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊ້ອນ-ຫ້ວຍຊື້ອຕັ້ງຢູ່ບ້ານນາຍາງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ.

**ຫົວໜ້າສູນ**

ກະຊວງກະສິກຳ ແລະ ປ່າໄມ້ ... ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊ້ອນ-ຫ້ວຍຊື້ອ

ດວງຕາວັນ ສີສົມບັດ

**ຕິດຕໍ່ພົວພັນ:**

1. ທ່ານ ພອນມະນີ ໄຊຍະເຊດຖາ ຫົວໜ້າຂະແໜງຊີບລະປະທານ ເບີໂທລະສັບ: 020 55699445;
2. ທ່ານ ຄຳປັນ ສິດທິວົງ ຫົວໜ້າຂະແໜງບໍລິຫານ ແລະ ແຜນການ ເບີໂທລະສັບ: 020 22337849.